CHILD CARE SUBSIDY PROGRAMS (CCSP)

# ໜັງສືອະນຸມັດ CCSP

## CCSP Authorization Letter

| ເລກໂທສູນກາງຕິດຕໍ່ | ເລກແຟກຊ໌ສູນກາງຕິດຕໍ່ |
|---|---|
| ເລກປະຈຳຕົວລູກຄ້າ | ວັນທີ |

☐ ການຝາກເດັກຕາມລະດູການ

☐ ການຝາກເດັກກ່ຽວພັນນຳວຽກງານ

ການອະນຸມັດຂອງການເບິ່ງແຍງດູແລເດັກນ້ອຍຂອງທ່ານໄດ້ຖືກອີງຕາມລາຍລະອຽດທີ່ທ່ານໄດ້ເອົາໃຫ້ກົມ **DSHS.**

ການເບິ່ງແຍງດູແລເດັກນ້ອຍໄດ້ຖືກອະນຸມັດໃຫ້ສຳລັບ ສຳລັບ ☐ ເຄິ່ງວັນ ☐ ເຕັມວັນ ☐ ຊົ່ວໂມງ

ການເບິ່ງແຍງດູແລເດັກນ້ອຍໄດ້ຖືກອະນຸມັດໃຫ້ສຳລັບ ສຳລັບ ☐ ເຄິ່ງວັນ ☐ ເຕັມວັນ ☐ ຊົ່ວໂມງ

ການເບິ່ງແຍງດູແລເດັກນ້ອຍໄດ້ຖືກອະນຸມັດໃຫ້ສຳລັບ ສຳລັບ ☐ ເຄິ່ງວັນ ☐ ເຕັມວັນ ☐ ຊົ່ວໂມງ

ການເບິ່ງແຍງດູແລເດັກນ້ອຍໄດ້ຖືກອະນຸມັດໃຫ້ສຳລັບ ສຳລັບ ☐ ເຄິ່ງວັນ ☐ ເຕັມວັນ ☐ ຊົ່ວໂມງ

<u>ເງິນຈ່າຍຮ່ວມກັນ</u>

ເງິນຈ່າຍຮ່ວມກັນແມ່ນສ່ວນຂອງທ່ານຂອງຄ່າເບິ່ງແຍງດູແລເດັກນ້ອຍຂອງທ່ານ ແລະ ຕ້ອງຖືກຈ່າຍໂດຍກົງໃຫ້ຜູ້ເບິ່ງແຍງດູແລເດັກນ້ອຍຂອງທ່ານ. ຖ້າຫາກວ່າທ່ານໄດ້ຖືກບົ່ງໃຫ້ຈ່າຍເງິນຈ່າຍຮ່ວມກັນຂອງທ່ານ, ຈຳນວນເງິນໄດ້ຖືກອີງໃສ່ຂະນາດຂອງຄອບຄົວຂອງທ່ານ ແລະ ລາຍໄດ້ປະຈຳເດືອນຂອງທ່ານ.

☐ ເງິນຈ່າຍຮ່ວມກັນປະຈຳເດືອນຂອງທ່ານຈະແມ່ນ $ ຕັ້ງແຕ່ ໄປເຖິງ .

☐ ເງິນຈ່າຍຮ່ວມກັນປະຈຳເດືອນຂອງທ່ານຈະແມ່ນ $ ຕັ້ງແຕ່ ໄປເຖິງ .

ຖ້າຫາກວ່າທ່ານໄດ້ຖືກບົ່ງໃຫ້ຈ່າຍເງິນຈ່າຍຮ່ວມກັນ, ທ່ານຕ້ອງໄດ້ຈ່າຍສຳລັບທຸກໆເດືອນທີ່ກົມ **DSHS** ຈ່າຍເງິນໃຫ້ສຳລັບການບໍລິການເບິ່ງແຍງດູແລເດັກນ້ອຍ. ຄວາມຜິດພາດທີ່ຈະຈ່າຍເງິນຈ່າຍຮ່ວມກັນທີ່ຕ້ອງໄດ້ຈ່າຍຂອງທ່ານອາດຈະເປັນຜົນເຖິງການຕັດການຊ່ວຍເຫລືອຄ່າຝາກເດັກນ້ອຍຂອງທ່ານໄວກວ່າກຳນົດ.
**WAC 110-15-0030 ແລະ 110-15-0110.**

ລາຍລະອຽດເພີ້ມເຕີມ:

DSHS ຖືວ່າເດັກນ້ອຍຢູ່ໃນລະຫວ່າງອາຍຸເຂົ້າໂຮງຮຽນຢູ່ຖ້າຫາກວ່າເຂົາເຈົ້າມີອາຍຸຫ້າປີໄປຮອດ 12 ປີກ່ອນເດືອນເຊັບເທັມເບີ 1. ຖ້າຫາກວ່າລູກຂອງທ່ານມີອາຍຸຫ້າປີ, ແຕ່ວ່າບໍ່ໄປເຂົ້າໂຮງຮຽນໃນລະດູໃບໄມ້ລົ່ນນີ້, ກະຣຸນາຕິດຕໍ່ຫາເລກຢູ່ຂ້າງເທິງນີ້.

<u>ຖ້າຫາກວ່າທ່ານໃຊ້ບ່ອນຝາກເດັກນ້ອຍທີ່ມີໃບອະນຸຍາດ</u>

ການອະນຸຍາດເຕັມວັນສຳລັບເດັກນ້ອຍຢູ່ໃນລະຫວ່າງອາຍຸເຂົ້າໂຮງຮຽນຢູ່ຈະຖືກລຸດລົງໂດຍອັດຕະໂນມັດໂລດໄປໃສ່ເຄິ່ງວັນສຳລັບປີເຂົ້າໂຮງຮຽນ, ເດືອນເຊັບເທັມເບີ ໄປເຖິງເດືອນເມ.

ການອະນຸຍາດເຕັມວັນສຳລັບເດັກນ້ອຍຢູ່ໃນລະຫວ່າງອາຍຸເຂົ້າໂຮງຮຽນເຕັມເວລາຢູ່ຈະຖືກເພີ້ມຂຶ້ນໂດຍອັດຕະໂນມັດໂລດຈາກ 30 ໄປເຖິງ 46 ເຄິ່ງວັນສຳລັບເດືອນຈູນ, ຈູນລາຍ ແລະ ອໍກັສ ເພື່ອຈະອຳນວຍຄວາມສະດວກໃນຍາມລະດູພັກຮ້ອນ.

**<u>ຖ້າຫາກວ່າທ່ານໃຊ້ບ່ອນຝາກເດັກນ້ອຍທີ່ຍົກເວັ້ນບໍ່ໃຫ້ມີໃບອະນຸຍາດ, ທີ່ເປັນຄອບຄົວ, ໝູ່ເພື່ອນ ແລະ ຄົນຂ້າງຄຽງ</u>**

ການອະນຸຍາດຫລາຍເກີນກວ່າ 115 ຊົ່ວໂມງຕໍ່ເດືອນສຳລັບເດັກນ້ອຍອາຍຸເຂົ້າໂຮງຮຽນຈະຖືກລຸດລົງໂດຍອັດຕະໂນມັດໂລດໄປໃສ່ 115 ຊົ່ວໂມງສຳລັບປີເຂົ້າໂຮງຮຽນ, , ເດືອນເຊັບເທັມເບີ ໄປເຖິງ ເດືອນເມ.

ຊົ່ວໂມງ "ການເບິ່ງແຍງດູແລເດັກນ້ອຍຍາມພັກໂຮງຮຽນ" , ໃນລະຫວ່າງ 35 - 70 ຊົ່ວໂມງໃນແຕ່ລະເດືອນ, ຈະມີໄວ້ໃຫ້ສຳລັບຜູ້ເບິ່ງແຍງເດັກນ້ອຍເພື່ອຈະທວງເອົາໃນລະຫວ່າງປີເຂົ້າໂຮງຮຽນ. ຊົ່ວໂມງເຫລົ່ານີ້ກວມເອົາເວລາເມື່ອເດັກນ້ອຍອາຍຸເຂົ້າໂຮງຮຽນບໍ່ໄປເຂົ້າໂຮງຮຽນ, ເຊັ່ນວ່າຖືກປ່ອຍຕົວອອກໄວ ແລະ ມື້ບໍ່ມີໂຮງຮຽນ. ໃນລະຫວ່າງໃນຍາມພັກຮ້ອນໃນເດືອນຈູນ, ຈູນລາຍ ແລະ ອໍກັສ, ມັນມີສູງຮອດ 115 ຊົ່ວໂມງ "ການເບິ່ງແຍງເດັກນ້ອຍຍາມພັກໂຮງຮຽນ" ໃນແຕ່ລະເດືອນ. ມັນມີບອກນຶ່ງຢູ່ໃນໃບເກັບເງິນທີ່ຖືກຂຽນໃສ່ວ່າບ່ອນທີ່ທີ່ຖືກໝາຍໃສ່ວ່າ "ການເບິ່ງແຍງເດັກນ້ອຍຍາມພັກໂຮງຮຽນ" ບ່ອນທີ່ຜູ້ເບິ່ງເດັກນ້ອຍທວງເອົາຊົ່ວໂມງເພີ້ມເຕີມ.

**<u>ການປ່ຽນບ່ອນຝາກເດັກນ້ອຍ?</u>**

ຖ້າຫາກວ່າທ່ານມີແຜນທີ່ຈະປ່ຽນບ່ອນຝາກເດັກນ້ອຍດ້ວຍເຫດຜົນໃດກໍຕາມ, ຫລື ມີການປ່ຽນແປງໃນຄວາມຕ້ອງການດ້ານການຝາກລູກຂອງທ່ານ ທ່ານຕ້ອງໄດ້ຕິດຕໍ່ຫາກົມ DSHS ພາຍໃນຫ້າວັນຂອງການປ່ຽນແປງຕາມທີ່ຖືກບົ່ງຢູ່ໄວ້ໂດຍກົດໝາຍ WAC 110-15-0031.

Child Care Aware ໃຫ້ຣາຍຣະອຽດ ແລະ ການສົ່ງຕໍ່ໄປຫາຟຣີ, ບໍ່ລຳອຽງສຳລັບຄອບຄົວທີ່ກຳລັງຊອກຫາບ່ອນຝາກເດັກນ້ອຍທີ່ມີໃບອະນຸຍາດທີ່ມີຄຸນນະພາບສູງ. ໂທໄປທີ່ເລກ 1-800-446-1114 ໄດ້ ຫລື ທາງອອນລາຍນ໌ໄດ້ທີ່ http://wa.childcareaware.org.

ເພື່ອຈະຊອກເບິ່ງສະພາບການຂອງການກວດເບິ່ງເບື້ອງຫລັງຂອງບ່ອນຝາກເດັກນ້ອຍທີ່ມີໃບອະນຸຍາດ, ປະວັດຂອງການອອກໃບອະນຸຍາດ, ລາຍງານກ່ຽວກັບການຄວບຄຸມເບິ່ງນຳ, ພາສາທີ່ເວົ້າໄດ້ ແລະ ຫລາຍຢ່າງຫລາຍແນວອີກໄດ້ຢູ່ທີ່ **Child Care Check ຢູ່ທີ່ www.del.wa.gov/check**.

ເພື່ອຈະຊອກຫາຣາຍຣະອຽດກ່ຽວກັບຈຸດສຳຄັນຂອງການຈະເຣີນເຕີບໂຕຂອງເດັກນ້ອຍ ແລະ ການມີໄວ້ໃຫ້ຂອງການກວດກັ່ນເບິ່ງການຈະເຣີນເຕີບໂຕຂອງລູກຂອງທ່ານ, ໂທຫາສາຍດ່ວນ Family Health Hotline ໄດ້ທີ່ 1-800-322-2588 ຫລືໄປທີ່ http://www.parenthelp123.org/child-development/child-development-screening-public

**ລາຍງານຄວາມເປັນຫ່ວງທຸກໆຢ່າງກ່ຽວກັບການລ່ວງລະເມີດການອອກໃບອະນຸຍາດທີ່ອາດຈະເປັນໄປໄດ້ ຫລື ການກົດຂີ່ຂົ່ມເຫັງ ຫລື ການປ່ອຍປະລະເລີຍເດັກນ້ອຍຢູ່ຕາມສະຖານທີ່ເບິ່ງແຍງເດັກນ້ອຍໂດຍການໂທຫາ 1-866-End Harm (1-866-363-4276).**

## ສິດທິຂອງການຟັງເຣື່ອງ

ຖ້າຫາກວ່າທ່ານບໍ່ເຫັນພ້ອມນຳຄຳຕັດສິນອັນນີ້, ທ່ານຈະຂໍເອົາການຟັງເຣື່ອງໄດ້ໂດຍການຕິດຕໍ່ໄປຫາຫ້ອງການແຫ່ງນີ້ ຫລື ຂຽນໜັງສືໄປຫາຫ້ອງການ Office of Administrative Hearings, P.O. Box 42489, Olympia, WA 98504-2489. ທ່ານຕ້ອງຂໍເອົາການຟັງເຣື່ອງຂອງທ່ານ:

- ໃນວັນທີ ຫລື ກ່ອນວັນທີມີຜົນບັງຄັບໃຊ້ໄດ້ຂອງການກະທຳອັນນີ້ ຫລື ບໍ່ກາຍເກີນ 10 ວັນຫລັງຈາກທີ່ພວກເຮົາໄດ້ສົ່ງໃບແຈ້ງການຂອງການກະທຳອັນນີ້ໄປໃຫ້ທ່ານ, ຖ້າຫາກວ່າທ່ານໄດ້ຮັບການຊ່ວຍເຫລືອຢູ່ໃນດຽວນີ້ ແລະ ທ່ານຕ້ອງການທີ່ຈະໃຫ້ມັນດຳເນີນຕໍ່ໄປ, ຫລື

- ພາຍໃນ 90 ວັນຂອງວັນທີທີ່ທ່ານໄດ້ຮັບໜັງສືສະບັບນີ້.

ໃນເວລາຟັງເຣື່ອງ, ທ່ານມີສິດທີ່ຈະເປັນຕົວແທນທ່ານເອງ, ຖືກເປັນຕົວແທນໂດຍທະນາຍຄວາມຄົນນຶ່ງ ຫລື ໂດຍຄົນອື່ນຄົນໃດຄົນນຶ່ງທີ່ທ່ານເລືອກເອົາ. ທ່ານຈະສາມາດໄດ້ຮັບຄຳແນະນຳຟຣີທາງດ້ານກົດໝາຍ ຫລື ການເປັນຕົວແທນໂດຍການຕິດຕໍ່ໄປຫາຫ້ອງການບໍຣິການດ້ານກົດໝາຍ.

ການລາຍງານການປ່ຽນແປງ

ໂທຫາ 1-877-501-2233 ຫລື ແຟກຊ໌ 1-888-338-7410
ອອນລາຍນ໌ໄດ້ທີ່: https://www.washingtonconnection.org/home/

ໄປສະນີ: DSHS Customer Service Contact Center
P.O. Box 11699
Tacoma WA 98411
ຂຽນເລກ **Client ID** ຂອງທ່ານໃສ່ເຈັ້ຽທຸກໆໜ້າທີ່ທ່ານສົ່ງເຂົ້າມາ.